## ການທາຣຸນໃນຄອບຄົວແມ່ນຫຍັງ?

**ການທາຣຸນໃນຄອບຄົວແມ່ນ:**

- ທຸກໆການກະທຳທີ່ຣຸນແຮງທຸກປະເພດ ຊຶ່ງເກີດຂຶ້ນຢູ່ໃນເຮືອນ ລະຫວ່າງຄົນສອງຄົນທີ່ຮູ້ກັນດີ, ເຊັ່ນຕົວຢ່າງ ຜົວແລະເມັຍ. ສິ່ງນີ້ຮວມມີ: ຮ້ອງໃສ່ຫຼືເອີ້ນແບບບໍ່ສຸພາບ; ເຕະຫຼືຕົບ; ຕີຫຼືຊຶກຕ່ອຍ; ຮ່ວມເພດແບບໃຊ້ກຳລັງບັງຄັບ ຫຼືແບບບໍ່ຕ້ອງການ.

- ເປັນບັນຫາຮ້າຍແຮງ ຈະຊຶ່ງຈະຮ້າຍແຮງລົງຕາມການເວລາ.
- ການເຮັດໃຫ້ທ່ານແລະລູກຂອງທ່ານ ເສັຍຫາຍດ້ານຮ່າງການ ແລະຈິດໃຈ.



*"ລາວເວົ້າວ່າ ຖ້າຂ້າພະເຈົ້າບອກ ຜູ້ໃດຜູ້ນຶ່ງວ່າລາວຕີຂ້າພະເຈົ້າ, ລາວຈະເອົາລູກຂອງຂ້າພະເຈົ້າໜີ"*

**ທ່ານແລະລູກມີສິດມີຊີວິດຢູ່ຢ່າງປາສຈາກ ຄວາມທາຣຸນ**

*"ຂ້າພະເຈົ້າບໍ່ຕ້ອງການຮ່ວມເພດ ແຕ່ລາວເມົາເຫຼົ້າ ແລະລາວຈຳໃຫ້ຂ້າພະເຈົ້າເຮັດ"*

**ທ່ານມີສິດບອກວ່າບໍ່ ກັບການຮ່ວມເພດ ໄດ້ໃນທຸກເມື່ອ, ເຖິງວ່າ ແມ່ນສາມີຂອງທ່ານກໍຕາມ**

## ມີສິ່ງໃດທີ່ຂ້າພະເຈົ້າສາມາດເຮັດໄດ້ ຖ້າຂ້າພະເຈົ້າຖືກທຳໃຫ້ເຈັບປວດ?

**ທ່ານສາມາດ:**

- **ລົມກັບຜູ້ໃດຜູ້ນຶ່ງທີ່ທ່ານໄວ້ໃຈ ແລະຜູ້ທີ່ຈະບໍ່ຕິຕຽນທ່ານ,** ເຊັ່ນຕົວຢ່າງ ສມາຊິກຄອບຄົວ, ໝູ່ເພື່ອນ, ຜູ້ໃດຜູ້ນຶ່ງທີ່ຢູ່ໃນໂບດຂອງທ່ານ, ຫຼືຜູ້ກຳກັບການຊ່ວຍເຫຼືອຂອງທ່ານ.
- **ລົມກັບຜູ້ໃດຜູ້ນຶ່ງ ຊຶ່ງມີຄວາມຊ່ຽວຊານດ້ານແກ້ໄຂບັນຫາ ການທາຣຸນໃນຄອບຄົວ,** ຄູສອນ, ແພດໝໍຫຼືພຍາບານ, ຫຼືຜູ້ໃດຜູ້ນຶ່ງທີ່ເຮັດວຽກຢູ່ສຖານທີ່ພັກຊົ່ວຄາວ.
- **ປະຕິບັດຕາມຂັ້ນຕອນ ເພື່ອຢູ່ຢ່າງປອດພັຍ:** ຝຶກຊ້ອມວິທີອອກຈາກເຮືອນ ດ້ວຍຄວາມປອດພັຍ ຖ້າມີການຣຸນແຮງເກີດຂຶ້ນ, ຫາໝູ່ເພື່ອນ ທີ່ທ່ານສາມາດພັກເຊົານຳໄດ້, ເກັບມ້ຽນເບີໂທລະສັບ ທີ່ອາດເປັນປໂຍດ ໄວ້ກັບຕົວທ່ານທຸກເວລາ.
- **ຫາຜູ້ໃຫ້ຄຳປຶກສາແນະນຳ** ໃຫ້ຊ່ວຍທ່ານໃຫ້ສ້າງຄວາມສຳພັນ ອັນແໜ້ນແຟ້ນຂຶ້ນກວ່າເກົ່າ. ບອກໃຫ້ສາມີຂອງທ່ານ ໄປຫາຜູ້ໃຫ້ຄຳແນະນຳ ເພື່ອແກ້ໄຂບັນຫາຂອງລາວຕ່າງຫາກ.
- **ຕິດຕໍ່ຫາລະບົບຊ່ວຍເຫຼືອ ດ້ານກົດໝາຍ** ເພື່ອປ້ອງກັນທ່ານ ຈາກການກະທຳຣຸນແຮງດັ່ງກ່າວ. ໂທຫາຕຳຣວດ ເພື່ອຂໍຄວາມຊ່ວຍເຫຼືອ.

## ໃຫ້ຈຳໄວ້ວ່າ!

- ການທາຣຸນໃນຄອບຄົວ ບໍ່ແມ່ນຄວາມຜິດຂອງຜູ້ຖືກເຄາະຮ້ອຍ **ຈັກເທື່ອ**.
- ທ່ານມີສິດຢູ່ຢ່າງປອດພັຍ.

- ທ່ານບໍ່ແມ່ນຜູ້ດຽວ ທີ່ເປັນເຊັ່ນນີ້. ຕາມການຄາດຄະເນ ຈະມີຜູ້ຍິງປະມານ (ນຶ່ງໃນແປດ) ຄົນທີ່ເປັນຜູ້ເຄາະຮ້າຍຂອງ ການທາຣຸນໃນຄອບຄົວນີ້.
- ມີຫຼາຍຄົນຊຶ່ງເປັນຫ່ວງເປັນໃຍ ແລະຕ້ອງການ ໃຫ້ຄວາມຊ່ວຍເຫຼືອ. ໃຫ້ໂທຫາເລກໂທຂ້າງລຸ່ມນີ້.

*"ລາວເອົາບັດເຄຣດິດຂອງຂ້າພະເຈົ້າໄປ ແລະບໍ່ຍອມໃຫ້ເງິນຂ້າພະເຈົ້າຊື້ເຄື່ອງທີ່ຈຳເປັນ"*

**ບໍ່ມີຜູ້ໃດມີສິດແຍກທ່ານໃຫ້ຢູ່ໂດດດ່ຽວ ແລະຄວບຄຸມຊີວິດຂອງທ່ານ**

Love Shouldn't Hurt
Lao Rev. 4/01